**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0036/ກປ

ນະຄອນຫຼວງວຽງຈັນ, ວັນທີ 04 JAN 2024

# ຂໍ້ຕົກລົງ

## ວ່າດ້ວຍ ການສ້າງຕັ້ງ ແລະ ການຄຸ້ມຄອງ ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ

- ອີງຕາມ ກົດໝາຍ ວ່າດ້ວຍ ຊົນລະປະທານ ສະບັບເລກທີ 26/ສພຊ, ລົງວັນທີ 14 ທັນວາ 2012;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມຊົນລະປະທານ ສະບັບເລກທີ 3330/ຊປທ, ລົງວັນທີ 12 ຕຸລາ 2023;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງຫ້ອງການກະຊວງ ກະສິກຳ ແລະ ປ່າໄມ້ ສະບັບເລກທີ 4171/ຫກ, ລົງວັນທີ 15 ພະຈິກ 2023.

### ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການສ້າງຕັ້ງ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ວຽກງານ ຂອງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ເພື່ອພັດທະນາກຸ່ມຜູ້ນຳໃຊ້ນ້ຳໃຫ້ເຂັ້ມແຂງ, ເປັນເຈົ້າຕົນເອງ ໃນການຄຸ້ມຄອງນຳໃຊ້ ແລະ ບົວລະບັດຮັກສາຊົນລະປະທານ, ແນ່ໃສ່ການບໍລິຫານຈັດການນ້ຳໃຫ້ທົ່ວເຖິງເຂດພື້ນທີ່ຊົນລະປະທານ ແລະ ນຳໃຊ້ນ້ຳໃຫ້ມີປະສິດທິຜົນໃນຂອບເຂດທົ່ວປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃຫ້ເຂັ້ມແຂງ.

**ມາດຕາ 2 ການສ້າງຕັ້ງ ແລະ ການຄຸ້ມຄອງ ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ**

ການສ້າງຕັ້ງ ແລະ ການຄຸ້ມຄອງ ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ແມ່ນການລວມຕົວກັນ ຂອງຊາວກະສິກອນທີ່ສະໝັກໃຈ ສ້າງຕັ້ງເປັນກຸ່ມຂຶ້ນ ເພື່ອຄຸ້ມຄອງ ແລະ ນຳໃຊ້ໂຄງການຊົນລະປະທານ ໃຫ້ມີປະສິດທິຜົນ ແລະ ຍືນຍົງ.

ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ຂຽນຫຍໍ້ວ່າ **"ກນຊ"** ແມ່ນການຈັດຕັ້ງ ຂອງຊາວກະສິກອນ ທີ່ນຳໃຊ້ນ້ຳ ແລະ ໄດ້ຮັບຜົນປະໂຫຍດຈາກ ໂຄງການຊົນລະປະທານ ເພື່ອຄຸ້ມຄອງ ແລະ ບໍລິຫານຈັດການນ້ຳ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບ ທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ກະສິກໍາ** ໝາຍເຖິງ ການປູກຝັງ, ການລ້ຽງສັດ ແລະ ການປະມົງ ເພື່ອຕອບສະໜອງທາງດ້ານທັນຍາຫານ ແລະ ອາຫານໃຫ້ແກ່ສັງຄົມ, ເປັນວັດຖຸດິບປ້ອນໂຮງງານອຸດສາຫະກໍາປຸງແຕ່ງ ລວມທັງເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ;

2. **ຊາວກະສິກອນ** ໝາຍເຖິງ ຜູ້ທີ່ເຮັດການຜະລິດກະສິກໍາເປັນອາຊີບ ເຊັ່ນ: ປູກຝັງ, ລ້ຽງສັດ ແລະ ການປະມົງ;

3. **ພັນທະຂອງສະມາຊິກ** ໝາຍເຖິງ ຄວາມຮັບຜິດຊອບ ຂອງສະມາຊິກ ຕ້ອງໄດ້ປະຕິບັດ ຕາມກົດລະບຽບຂອງກຸ່ມຜູ້ນໍາໃຊ້ນໍ້າ ແລະ ການມອບໝາຍຂອງຄະນະບໍລິຫານກຸ່ມ;

4. **ການສົ່ງນໍ້າ** ໝາຍເຖິງ ວິທີການ ຫຼື ຮູບແບບຂອງການສົ່ງນໍ້າ ຈາກຄອງເໝືອງແມ່ໄປສູ່ລະບົບສົ່ງນໍ້າ ເພື່ອນໍາເອົານໍ້າໄປສູ່ເນື້ອທີ່ການຜະລິດ ຕາມຮູບແບບທີ່ເໝາະສົມ;

5. **ການສົ່ງນໍ້າແບບຕໍ່ເນື່ອງ ຫຼື ແບບເສລີ** ໝາຍເຖິງ ການສົ່ງນໍ້າໃຫ້ເນື້ອທີ່ການຜະລິດ ແບບຄົງທີ່ຕະຫຼອດຊາວສີ່ ຊົ່ວໂມງ ຕັ້ງແຕ່ເລີ່ມປູກ ຈົນເຖິງເກັບກ່ຽວ;

6. **ການສົ່ງນໍ້າແບບຕາມຄວາມຕ້ອງການ** ໝາຍເຖິງ ວິທີການສົ່ງນໍ້າ ທີ່ມີນໍ້າພຽງພໍ ທີ່ຈະສົ່ງໃຫ້ຜູ້ໃຊ້ນໍ້າຢູ່ສະເໝີ ຕາມຈໍານວນ ແລະ ເວລາທີ່ຕ້ອງການ;

7. **ການສົ່ງນໍ້າແບບໝູນວຽນ** ໝາຍເຖິງ ການສົ່ງນໍ້າໃຫ້ເນື້ອທີ່ການຜະລິດ ຫຼື ຜູ້ໃຊ້ນໍ້າຕາມຈໍານວນ ແລະ ໄລຍະເວລາທີ່ກໍານົດໄວ້ລ່ວງໜ້າຢ່າງມີແຜນການ ແລະ ປະຢັດ ໂດຍປ່ຽນກັນເອົານໍ້າຕາມຮອບວຽນທີ່ກໍານົດໄວ້.

**ມາດຕາ 4 ຫຼັກການພື້ນຖານໃນການສ້າງຕັ້ງ ແລະ ການຄຸ້ມຄອງກຸ່ມ**

ການສ້າງຕັ້ງ ແລະ ການຄຸ້ມຄອງ ກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ ຕ້ອງປົບພື້ນຖານຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ, ລະບຽບການ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນພັດທະນາ ຂອງຂະແໜງການກະສິກໍາ ແລະ ປ່າໄມ້;
2. ມີຄວາມສະໝັກໃຈ, ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ;
3. ມີສິດ ແລະ ຜົນປະໂຫຍດຂອງສະມາຊິກຮ່ວມກັນ;
4. ຮັບປະກັນຄວາມສະເໝີພາບ, ໂປ່ງໃສ ແລະ ຍຸຕິທໍາ;
5. ມີລະບຽບການຄຸ້ມຄອງກຸ່ມ.

**ມາດຕາ 5 ພັນທະຂອງກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ**

ກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ ມີພັນທະໃນການບົວລະບັດຮັກສາ, ຟື້ນຟູ, ສ້ອມແປງໂຄງການຊົນລະປະທານ, ເສຍຄ່ານໍາໃຊ້ນໍ້າ ເຂົ້າກອງທຶນພັດທະນາຊົນລະປະທານ, ຄ່ານໍາໃຊ້ກະແສໄຟຟ້າ ແລະ ການປະກອບສ່ວນອື່ນ ເພື່ອຜົນປະໂຫຍດລວມ ຂອງໂຄງການຊົນລະປະທານ.

**ມາດຕາ 6 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງກັບກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ ຢູ່ ສປປ ລາວ.

# ໝວດທີ 2
# ການສ້າງຕັ້ງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ

**ມາດຕາ 7 ເງື່ອນໄຂການສ້າງຕັ້ງກຸ່ມ**

ການສ້າງຕັ້ງ **"ກນຊ"** ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີສະມາຊິກ ຂອງກຸ່ມ ຫ້າ ຄົນ ຂຶ້ນໄປ ຊຶ່ງເປັນພົນລະເມືອງລາວ, ມີອາຍຸ ສິບແປດ ປີ ຂຶ້ນໄປ ແລະ ສະມາຊິກແຕ່ລະຄົນ ບໍ່ໄດ້ຢູ່ໃນສຳມະໂນຄົວດຽວກັນ;
2. ເປັນເຈົ້າຂອງ ການຜະລິດກະສິກຳ ທີ່ນຳໃຊ້ນ້ຳໂຄງການຊົນລະປະທານ.

**ມາດຕາ 8 ຂັ້ນຕອນການສ້າງຕັ້ງກຸ່ມ**

ການສ້າງຕັ້ງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ຕ້ອງປະຕິບັດຕາມຂັ້ນຕອນພື້ນຖານ ດັ່ງນີ້:

1. ເກັບກຳຂໍ້ມູນພື້ນຖານໂຄງລ່າງ ຂອງໂຄງການຢູ່ພາກສະໜາມ ຕາມແຜນທີ່ການນຳໃຊ້ລະບົບຊົນລະປະທານ ເຊັ່ນ: ຫົວງານ, ລະບົບຄອງເໝືອງ, ອາຄານ, ປະຕູນ້ຳຕາມຄອງເໝືອງແຕ່ລະສາຍຄອງ ແລະ ເນື້ອທີ່ກຳມະສິດດິນນາແຕ່ລະເຈົ້າ;
2. ຈັດກອງປະຊຸມ ຮ່ວມກັບ ອົງການປົກຄອງເມືອງ, ອົງການປົກຄອງບ້ານທີ່ກ່ຽວຂ້ອງ ແລະ ຜູ້ນຳໃຊ້ນ້ຳຊົນລະປະທານ ທີ່ໄດ້ຮັບຜົນປະໂຫຍດຈາກໂຄງການຊົນລະປະທານ ເພື່ອສ້າງຕັ້ງກຸ່ມ, ຄັດເລືອກຄະນະບໍລິຫານ, ກຳນົດໂຄງຮ່າງການຈັດຕັ້ງ ແລະ ກົດລະບຽບ ຂອງກຸ່ມຜູ້ນຳໃຊ້ນ້ຳ.

**ມາດຕາ 9 ອົງປະກອບຂອງການສ້າງຕັ້ງກຸ່ມ**

ອົງປະກອບ ຂອງການສ້າງຕັ້ງກຸ່ມ ແມ່ນຂຶ້ນກັບຂະໜາດ ແລະ ລະບົບຫົດ ຂອງໂຄງການທີ່ສ້າງຂຶ້ນ ເພື່ອກຳນົດເປັນຈຸຮັບນ້ຳ, ໜ່ວຍຮັບນ້ຳ ແລະ ກຸ່ມຜູ້ນຳໃຊ້ນ້ຳ.

ກຸ່ມຜູ້ນຳໃຊ້ນ້ຳ ກ້າວຂຶ້ນເປັນສະມາຄົມຜູ້ນຳໃຊ້ນ້ຳ ຫຼື ສ້າງຕັ້ງຂຶ້ນໃໝ່ ເປັນສະມາຄົມຜູ້ນຳໃຊ້ນ້ຳ ຕ້ອງດຳເນີນຕາມຂັ້ນຕອນ, ຈຸດປະສົງ ແລະ ເງື່ອນໄຂ ທີ່ກຳນົດໄວ້ໃນ ດຳລັດ ວ່າດ້ວຍສະມາຄົມ.

**ມາດຕາ 10 ການສະເໜີສ້າງຕັ້ງກຸ່ມ**

ຜູ້ທີ່ມີຈຸດປະສົງສ້າງຕັ້ງກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ໃຫ້ຍື່ນຄຳຮ້ອງ ແລະ ປະກອບເອກະສານ ຕໍ່ ອົງການປົກຄອງຂັ້ນເມືອງ ໂດຍຜ່ານຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

ເອກະສານ ຂໍສ້າງຕັ້ງກຸ່ມ ປະກອບມີ ດັ່ງນີ້:

1. ໃບຄຳຮ້ອງຂໍສ້າງຕັ້ງກຸ່ມ ຕາມແບບພິມ ທີ່ ກົມຊົນລະປະທານ ກຳນົດ;
2. ບັນຊີລາຍຊື່ຄະນະບໍລິຫານກຸ່ມ ແລະ ສະມາຊິກກຸ່ມ;
3. ບົດບັນທຶກກອງປະຊຸມສ້າງຕັ້ງກຸ່ມ;
4. ໂຄງຮ່າງການຈັດຕັ້ງ ຂອງກຸ່ມ;
5. ທີ່ຕັ້ງຫ້ອງການ ຂອງກຸ່ມ;
6. ກົດລະບຽບ ຂອງກຸ່ມ;
7. ພາລະບົດບາດ ຂອງກຸ່ມ;
8. ແຜນການເຄື່ອນໄຫວ ຂອງກຸ່ມ.

**ມາດຕາ 11 ການອະນຸຍາດສ້າງຕັ້ງກຸ່ມ**

ພາຍຫຼັງໄດ້ຮັບຄໍາຮ້ອງຂໍສ້າງຕັ້ງກຸ່ມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ຂອງຂໍ້ຕົກລົງສະບັບນີ້ ອົງການປົກຄອງຂັ້ນເມືອງ ຄົ້ນຄວ້າພິຈາລະນາອອກ ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ ພາຍໃນ ເຈັດ ວັນ ລັດຖະການ.

**ມາດຕາ 12 ກົດລະບຽບ ຂອງກຸ່ມ**

ກົດລະບຽບ ຂອງກຸ່ມຜູ້ນໍາໃຊ້ນໍ້າ ຕ້ອງລະບຸເຖິງເນື້ອໃນພື້ນຖານ ດັ່ງນີ້:

1. ຊື່ ແລະ ທີ່ຕັ້ງ ຂອງກຸ່ມຜູ້ນໍາໃຊ້ນໍ້າ;
2. ຈຸດປະສົງ ຂອງກຸ່ມ;
3. ການເລືອກຕັ້ງຄະນະບໍລິຫານງານກຸ່ມຜູ້ນໍາໃຊ້ນໍ້າ;
4. ການຄຸ້ມຄອງລະບົບຊົນລະປະທານ ແລະ ການປັບໃໝ;
5. ການຜະລິດກະສິກໍາ ແລະ ການສົ່ງເສີມ;
6. ຫຼັກການເກັບຄ່ານໍາໃຊ້ນໍ້າຊົນລະປະທານ;
7. ການຍ້ອງຍໍ ແລະ ປັບໃໝ;
8. ການຄຸ້ມຄອງກອງທຶນ;
9. ການປົກປັກຮັກສາສິ່ງແວດລ້ອມ;
10. ການປັບປຸງ, ປ່ຽນແປງ ແລະ ລຶບລ້າງ ກົດລະບຽບ ຂອງກຸ່ມ;
11. ເນື້ອໃນອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 13 ຜົນປະໂຫຍດໃນການເຂົ້າເປັນສະມາຊິກ ຂອງກຸ່ມ**

ສະມາຊິກ ຂອງກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ ຈະໄດ້ຮັບຜົນປະໂຫຍດ ເປັນຕົ້ນ ມີບຸລິມະສິດນໍາໃຊ້ນໍ້າຢ່າງພຽງພໍ ແລະ ຍຸຕິທໍາ ເຂົ້າໃນການຜະລິດກະສິກໍາ ໃຫ້ທັນລະດູການ ແລະ ອັດຕາສ່ວນການແບ່ງປັນຄ່ານໍາໃຊ້ນໍ້າ ໂຄງການຊົນລະປະທານແຕ່ລະປະເພດ ທີ່ໄດ້ກໍານົດໃນ ກົດໝາຍ ວ່າດ້ວຍຊົນລະປະທານ ແລະ ຂໍ້ຕົກລົງ ວ່າດ້ວຍການສ້າງຕັ້ງ ແລະ ການຄຸ້ມຄອງ ກອງທຶນພັດທະນາຊົນລະປະທານ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງກຸ່ມ**

ກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວຕາມແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ກົດລະບຽບຂອງກຸ່ມ;
2. ໄດ້ຮັບການຊ່ວຍເຫຼືອ ຫຼື ການແນະນໍາຈາກ ພາກລັດ, ເອກະຊົນ ແລະ ຕ່າງປະເທດ ທາງດ້ານວິຊາການ ແລະ ການນໍາໃຊ້ເຕັກໂນໂລຊີທັນສະໄໝ;
3. ຝຶກອົບຮົມວຽກງານຄຸ້ມຄອງ ແລະ ນໍາໃຊ້ຊົນລະປະທານ ໃຫ້ກັບສະມາຊິກກຸ່ມຜູ້ນໍາໃຊ້ນໍ້າຊົນລະປະທານ ຕາມລະບຽບການ;
4. ເປັນເຈົ້າການກໍາມະສິດຕໍ່ວັດຖຸຊັບສິນ ແລະ ຜົນທີ່ໄດ້ຮັບ ຈາກການດໍາເນີນງານຂອງຕົນ ຕາມກົດລະບຽບ ຂອງກຸ່ມ;
5. ສ້າງແຜນການສົ່ງນໍ້າ, ຕິດຕາມການເປີດ-ປິດປະຕູນໍ້າ ຈາກລະບົບຫົວງານ, ອາຄານຕາມຄອງເໝືອງ ແລະ ຄອງລະບາຍປ້ອງກັນນໍ້າຖ້ວມ ໃຫ້ສະມາຊິກ ຢ່າງທົ່ວເຖິງ ແລະ ເປັນທໍາ;
6. ນໍາພາສະມາຊິກ ນໍາໃຊ້ນໍ້າ ປະກອບສ່ວນບໍາລຸງຮັກສາ ແລະ ສ້ອມແປງຊົນລະປະທານ;

7. ລາຍງານບັນຫາ ຫຼື ອຸປະສັກທີ່ເກີດຂຶ້ນໃນການສົ່ງນ້ຳ ແລະ ການບຳລຸງຮັກສາລ້ອມແປງຊົນລະປະທານ ໃຫ້ພະນັກງານຊົນລະປະທານ ເປັນປົກກະຕິ;

8. ແກ້ໄຂຂໍ້ຂັດແຍ່ງ, ບັນຫາການໃຊ້ນ້ຳ ລະຫວ່າງ ສະມາຊິກດ້ວຍກັນ ແລະ ເຕົ້າໂຮມບັນດາສະມາຊິກ ເຂົ້າສູ່ການຈັດຕັ້ງດຽວກັນ;

9. ເປີດກອງປະຊຸມຢ່າງປົກກະຕິ ເພື່ອປັບປຸງການນຳໃຊ້ນ້ຳ ແລະ ພັດທະນາກຸ່ມ ໃຫ້ດີຂຶ້ນ;

10. ສ້າງແຜນການຄາດຄະເນລາຍຮັບຈາກ ການເກັບຄ່ານ້ຳ, ລາຍຈ່າຍການນຳໃຊ້ກະແສໄຟຟ້າ, ການຟື້ນຟູ, ສ້ອມແປງ ແລະ ການບໍລິຫານ ໃນການຜະລິດກະສິກຳໃນແຕ່ລະດູ;

11. ເກັບຄ່ານຳໃຊ້ນ້ຳ ແລະ ສະຫຼຸບຄ່ານຳໃຊ້ນ້ຳ, ຄ່າກະແສໄຟຟ້າ ໃຫ້ຄົບຖ້ວນນຳສະມາຊິກທີ່ນຳໃຊ້ນ້ຳແຕ່ ລະດູການຜະລິດ;

12. ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວອົງການຂອງກຸ່ມ ໃຫ້ອົງການທີ່ອະນຸຍາດ ແລະ ອົງການ ປົກຄອງຂັ້ນເມືອງ ບ່ອນກຸ່ມຕັ້ງຢູ່ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ, ລະບຽບການ ແລະ ກົດລະບຽບ ຂອງກຸ່ມ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງກຸ່ມ

### ມາດຕາ 15 ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

ໂຄງປະກອບການຈັດຕັ້ງ ຂອງ **"ກນຊ"** ປະກອບດ້ວຍ:

1. ກອງປະຊຸມຂອງກຸ່ມ;
2. ຄະນະບໍລິຫານງານກຸ່ມ;
3. ຄະນະກວດກາກຸ່ມ;
4. ສະມາຊິກກຸ່ມ.

ໂຄງປະກອບບຸກຄະລາກອນ ຂອງ **"ກນຊ"** ປະກອບດ້ວຍ:

1. ປະທານ;
2. ຮອງປະທານ ແລະ ຄະນະກຸ່ມ;
3. ທີ່ປຶກສາ;
4. ສະມາຊິກກຸ່ມ.

### ມາດຕາ 16 ກອງປະຊຸມຂອງກຸ່ມ

ກອງປະຊຸມຂອງກຸ່ມ ແມ່ນການຈັດຕັ້ງສູງສຸດຂອງກຸ່ມ ຊຶ່ງປະກອບດ້ວຍ ກອງປະຊຸມສາມັນ ເປີດຂຶ້ນຢ່າງໜ້ອຍ ປີລະຄັ້ງ, ກອງປະຊຸມວິສາມັນ ເປີດຂຶ້ນເມື່ອໃດກໍ່ໄດ້ ເພື່ອພິຈາລະນາ ບັນຫາສຳຄັນ, ຈຳເປັນ ແລະ ຮີບດ່ວນ ຕາມ ການຮຽກເຊີນຂອງຄະນະບໍລິຫານງານກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ແລະ ສາມາດນຳເອົາທຸກບັນຫາຂອງກຸ່ມ ເຂົ້າພິຈາລະນາ.

ກອງປະຊຸມຂອງກຸ່ມ ຈະເປີດໄດ້ກໍຕໍ່ເມື່ອມີສະມາຊິກເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂຶ້ນໄປ ຂອງຈຳ ນວນສະມາຊິກທັງໝົດ.

**ມາດຕາ 17 ຄະນະບໍລິຫານງານກຸ່ມ**

ຄະນະບໍລິຫານງານກຸ່ມ ເປັນຜູ້ບໍລິຫານວຽກທຸກຢ່າງຂອງກຸ່ມ ແລະ ເປັນຕົວແທນຂອງກຸ່ມ ໃນການພົວພັນວຽກງານກັບບຸກຄົນພາຍນອກ ໂດຍມີການແບ່ງວຽກງານໃຫ້ແຕ່ລະຄົນຮັບຜິດຊອບ ຊຶ່ງປະກອບດ້ວຍ: ປະທານ, ຮອງປະທານ ແລະ ຄະນະກຸ່ມ.

ຄະນະບໍລິຫານງານກຸ່ມ ຕ້ອງມີຈຳນວນ ສາມ ຄົນ ຂຶ້ນໄປ ແລະ ແທດເໝາະກັບຈຳນວນສະມາຊິກຂອງກຸ່ມ ຊຶ່ງໄດ້ຮັບການເລືອກຕັ້ງມາຈາກສະມາຊິກ, ມີອາຍຸການ ຫ້າ ປີ ແລະ ສາມາດສະໝັກເລືອກຕັ້ງໄດ້ຕື່ມອີກ.

ຄະນະບໍລິຫານງານກຸ່ມ ມີມາດຕະຖານ ແລະ ເງື່ອນໄຂ ດັ່ງນີ້:

1. ເປັນຄົນລາວ, ຖືສັນຊາດລາວ ບໍ່ເຄີຍກະທຳຜິດ ແລະ ຖືກສານຕັດສິນມາກ່ອນ;
2. ມີລະດັບວັດທະນະທຳ ອ່ານ, ຂຽນໄດ້ ແລະ ເປັນບຸກຄົນທີ່ເຄີຍບໍລິຫານວຽກງານພາຍໃນບ້ານຜ່ານມາ;
3. ມີຄວາມຊື່ສັດ, ບໍລິສຸດ ຕໍ່ຜົນປະໂຫຍດອັນລວມ ແລະ ເປັນຜູ້ທີ່ໄດ້ຮັບຄວາມເຊື່ອໝັ້ນຈາກປະຊາຊົນພາຍໃນກຸ່ມບ້ານ;
4. ຕ້ອງແມ່ນບຸກຄົນທີ່ມີຖິ່ນຖານພູມລຳເນົາຢູ່ໃນເຂດບ້ານເປົ້າໝາຍໂຄງການ;
5. ຕ້ອງແມ່ນຜູ້ທີ່ເປັນສະມາຊິກເຮັດການຜະລິດທີ່ຖາວອນ ແລະ ມີເນື້ອທີ່ຢູ່ໃນເຂດຮັບນ້ຳຊົນລະປະທານ;
6. ມີອາຍຸ ຊາວຫ້າ ປີ ຂຶ້ນໄປ ແລະ ມີສຸຂະພາບແຂງແຮງດີ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງຄະນະບໍລິຫານງານກຸ່ມ**

ຄະນະບໍລິຫານງານກຸ່ມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກຳນົດນະໂຍບາຍ, ຕິດຕາມ, ກວດກາ ແລະ ຊຸກຍູ້ ການເຄື່ອນໄຫວວຽກງານ ຂອງ **"ກນຊ"**;
2. ເປັນຜູ້ລົງລາຍເຊັນເອກະສານທັງໝົດຂອງກຸ່ມ ເປັນຕົ້ນແມ່ນ ຂໍ້ຕົກລົງ, ບົດລາຍງານ, ແຜນການ ແລະ ເອກະສານ ດ້ານການເງິນ (ລາຍຮັບ-ລາຍຈ່າຍ);
3. ແຕ່ງຕັ້ງໜ່ວຍງານທີ່ພົວພັນກັບໂຄງປະກອບຂອງກຸ່ມ ໃຫ້ສອດຄ່ອງກັບລະບຽບທີ່ວາງໄວ້;
4. ຊີ້ນຳ ແລະ ແບ່ງຄວາມຮັບຜິດຊອບວຽກງານຂອງກຸ່ມ ເພື່ອຈັດຕັ້ງປະຕິບັດຕາມພາລະບົດບາດ;
5. ຕັດສິນ ແລະ ແກ້ໄຂບັນຫາທັງໝົດ ທີ່ເກີດຂຶ້ນໃນວຽກງານ ຂອງ **"ກນຊ"**;
6. ຮຽກໂຮມ ແລະ ເຂົ້າຮ່ວມກອງປະຊຸມສາມັນ, ວິສາມັນ, ກອງປະຊຸມຄະນະບໍລິຫານກຸ່ມ ຫຼື ກອງປະຊຸມອື່ນໆ ທີ່ກ່ຽວຂ້ອງກັບວຽກງານຂອງກຸ່ມ;
7. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານຂອງກຸ່ມ;
8. ກວດກາແຜນການສ້ອມແປງ, ແຈກຢາຍນ້ຳ ແລະ ແຜນເກັບເງິນຄ່ານຳໃຊ້ນ້ຳ ປະຈຳລະດູການ;
9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງກຸ່ມ ປະຈຳ ສາມເດືອນ, ຫົກເດືອນ, ເກົ້າເດືອນ ແລະ ປະຈຳປີ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ກົດລະບຽບຂອງກຸ່ມ.

**ມາດຕາ 19 ຄະນະກວດກາກຸ່ມ**

ຄະນະກວດກາກຸ່ມ ປະກອບດ້ວຍ ປະທານ, ຮອງປະທານ ແລະ ຄະນະຈຳນວນໜຶ່ງ ຊຶ່ງໄດ້ຮັບການເລືອກຕັ້ງ ແລະ ປົດຕຳແໜ່ງຈາກກອງປະຊຸມຂອງກຸ່ມ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງຄະນະກວດກາກຸ່ມ**

ຄະນະກວດກາກຸ່ມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການປະຕິບັດວຽກງານ ຂອງຄະນະບໍລິຫານງານກຸ່ມ ກ່ຽວກັບ ການນຳໃຊ້ນ້ຳຊົນລະປະທານ, ການນຳໃຊ້ເງິນ ແລະ ຊັບສິນບັດຕ່າງໆ ຕາມກົດລະບຽບ ແລະ ມະຕິກອງປະຊຸມຂອງກຸ່ມ;
2. ກວດກາການບໍລິຫານຈັດການນ້ຳຊົນລະປະທານໃຫ້ທົ່ວເຖິງ ແລະ ຍຸຕິທຳ;
3. ເຂົ້າຮ່ວມກອງປະຊຸມ ຂອງຄະນະບໍລິຫານງານກຸ່ມ ແລະ ກອງປະຊຸມ ຂອງສະມາຊິກກຸ່ມ;
4. ລາຍງານຜົນຂອງການກວດກາ ຕໍ່ຄະນະບໍລິຫານງານກຸ່ມ ແລະ ຕໍ່ກອງປະຊຸມ ຂອງສະມາຊິກກຸ່ມ;
5. ທວງໃຫ້ຜູ້ກ່ຽວຂ້ອງໃນກຸ່ມ ສະໜອງເອກະສານ ແລະ ຂໍ້ມູນຕ່າງໆທີ່ຕ້ອງການ ເພື່ອຮັບໃຊ້ວຽກງານກວດກາ ພ້ອມທັງປົກປັກຮັກສາຄວາມລັບ ກ່ຽວກັບ ຂໍ້ມູນດັ່ງກ່າວ;
6. ຮຽກປະຊຸມວິສາມັນ ໃນກໍລະນີມີການລະເມີດກົດລະບຽບ ຫຼື ມະຕິກອງປະຊຸມ ຂອງສະມາຊິກກຸ່ມ, ບັນຫາທີ່ມີຜູ້ສະເໜີໃຫ້ປັບປຸງແກ້ໄຂ ແຕ່ບໍ່ໄດ້ຮັບການແກ້ໄຂ ຫຼື ແກ້ໄຂແລ້ວ ແຕ່ບໍ່ມີປະສິດທິຜົນ ຫຼື ຄະນະບໍລິຫານກຸ່ມ ບໍ່ຮຽກປະຊຸມ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງກຸ່ມ;
7. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການປະຕິບັດແຜນການພັດທະນາຊົນລະປະທານ ຂອງກຸ່ມ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ກົດລະບຽບ ຂອງກຸ່ມ.

**ມາດຕາ 21 ສະມາຊິກກຸ່ມ**

ສະມາຊິກກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ແມ່ນບຸກຄົນທີ່ມີເນື້ອທີ່ດິນ, ຜູ້ທີ່ເຊົ່າທີ່ດິນ ຫຼື ສຳປະທານທີ່ດິນ ເພື່ອເຮັດການຜະລິດກະສິກຳ ທີ່ສະໝັກໃຈເຂົ້າເປັນສະມາຊິກ ແລະ ປະຕິບັດຕາມກົດລະບຽບຂອງກຸ່ມ.

ຊາວກະສິກອນ ທີ່ຈະເຂົ້າເປັນສະມາຊິກກຸ່ມຜູ້ນຳໃຊ້ນ້ຳ ຕ້ອງປະກອບເອກະສານຕາມເງື່ອນໄຂ ດັ່ງນີ້:

1. ຂຽນໃບຄຳຮ້ອງ ຂໍສະໝັກເຂົ້າເປັນສະມາຊິກ;
2. ສຳເນົາປຶ້ມສຳມະໂນຄົວ ຫຼື ບັດປະຈຳຕົວ;
3. ສຳເນົາ ໃບ ຕາດິນ, ເຊົ່າທີ່ດິນ ຫຼື ສຳປະທານທີ່ດິນ ເພື່ອເຮັດການຜະລິດກະສິກຳ.

**ມາດຕາ 22 ສິດ ແລະ ໜ້າທີ່ ຂອງສະມາຊິກ**

ສະມາຊິກກຸ່ມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມຊຶມ ແລະ ປະຕິບັດຕາມແນວທາງຂອງພັກ, ກົດໝາຍ, ລະບຽບການ ແລະ ກົດລະບຽບ ຂອງກຸ່ມ;
2. ເປັນເຈົ້າການປົກປັກຮັກສາ ແລະ ຄຸ້ມຄອງນຳໃຊ້ຊົນລະປະທານ ໃຫ້ມີປະສິດທິຜົນ;
3. ນຳໃຊ້ນ້ຳ ຕາມການແບ່ງປັນ ແລະ ການຕົກລົງເຫັນດີ ຂອງຄະນະບໍລິຫານງານກຸ່ມ;
4. ເຂົ້າຮ່ວມກອງປະຊຸມ, ປະກອບຄຳຄິດເຫັນ, ຍົກລະດັບ ແລະ ການກຳນົດນະໂຍບາຍ ຂອງກຸ່ມ;
5. ເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ ເປັນຄະນະບໍລິຫານງານກຸ່ມ;
6. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງກຸ່ມ ແລະ ສະມາຊິກ;
7. ສະເໜີເປີດກອງປະຊຸມວິສາມັນ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດລະບຽບ ຂອງກຸ່ມ;
8. ສະເໜີຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ເພື່ອພິຈາລະນາແກ້ໄຂບັນຫາໃດໜຶ່ງ ໃນກໍລະນີກຸ່ມ ບໍ່ແກ້ໄຂ ຫຼື ບໍ່ສາມາດແກ້ໄຂໄດ້;
9. ລາອອກຈາກການເປັນສະມາຊິກກຸ່ມ ໂດຍໄດ້ຮັບຜົນປະໂຫຍດ ຕາມກົດລະບຽບ ຂອງກຸ່ມ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ກົດລະບຽບ ຂອງກຸ່ມ.

**ມາດຕາ 23 ການສິ້ນສຸດການເປັນ ຄະນະບໍລິຫານງານກຸ່ມ, ຄະນະກວດກາກຸ່ມ ແລະ ສະມາຊິກກຸ່ມ**

ຄະນະບໍລິຫານງານກຸ່ມ ແລະ ຄະນະກວດກາກຸ່ມ ມີອາຍຸການສະໄໝລະ ຫ້າ ປີ ແລະ ສາມາດລົງສະໝັກຮັບເລືອກຕັ້ງຄືນໃໝ່ໄດ້, ສ່ວນສະມາຊິກກຸ່ມ ແມ່ນບໍ່ມີວັນສິ້ນສຸດ ຍົກເວັ້ນການສິ້ນສຸດດ້ວຍເຫດຜົນອື່ນ ດັ່ງນີ້:

1. ເສຍຊີວິດ;
2. ເປັນບ້າ, ເສຍຈິດ ຫຼື ບໍ່ມີຄວາມສາມາດດ້ານການປະພຶດ;
3. ລາອອກ ໂດຍໄດ້ຮັບອະນຸຍາດ;
4. ກຸ່ມ ຖືກຍຸບເລີກ;
5. ຖືກໄລ່ອອກຈາກການເປັນສະມາຊິກ ຍ້ອນມີການລະເມີດກົດໝາຍ, ລະບຽບການ ແລະ ກົດລະບຽບຂອງກຸ່ມ ຊຶ່ງສ້າງຄວາມເສຍຫາຍແກ່ **"ກນຊ"** ຫຼື ສັງຄົມ ໂດຍຜ່ານການລົງຄະແນນສຽງໃນກອງປະຊຸມຂອງກຸ່ມ;
6. ປະລະໜ້າທີ່.

## ໝວດທີ 4
## ການໂຮມ, ການແຍກ ແລະ ການຍຸບເລີກກຸ່ມ

**ມາດຕາ 24 ການໂຮມ**

ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ກຸ່ມໜຶ່ງ ສາມາດໂຮມເຂົ້າກັບກຸ່ມອື່ນ ຫຼື ຫຼາຍກຸ່ມ ທີ່ເຄື່ອນໄຫວໃນຂົງເຂດ ແລະ ຢູ່ໃນເຂດດຽວກັນ ເພື່ອກາຍເປັນກຸ່ມໃດໜຶ່ງ ຫຼື ສ້າງເປັນກຸ່ມໃໝ່ ຕ້ອງມີມະຕິຕົກລົງເຫັນດີຈາກກອງປະຊຸມກຸ່ມ ຂອງແຕ່ລະກຸ່ມທີ່ກ່ຽວຂ້ອງ, ມີການປັບປຸງການຈັດຕັ້ງ ແລະ ໄດ້ຮັບອະນຸຍາດຈາກອົງການປົກຄອງຂັ້ນເມືອງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 25 ການແຍກ**

ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ກຸ່ມໜຶ່ງ ສາມາດແຍກເປັນສອງກຸ່ມ ຫຼື ຫຼາຍກຸ່ມໄດ້ ຕ້ອງມີມະຕິຕົກລົງເຫັນດີຈາກກອງປະຊຸມກຸ່ມ, ດຳເນີນການສ້າງຕັ້ງກຸ່ມທີ່ແຍກ ແລະ ໄດ້ຮັບອະນຸຍາດຈາກອົງການປົກຄອງຂັ້ນເມືອງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 26 ການຍຸບເລີກ**

ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ຈະຖືກຍຸບເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ດ້ວຍຄວາມສະໝັກໃຈ ໂດຍມີມະຕິຕົກລົງ ຂອງກອງປະຊຸມກຸ່ມ;
2. ບໍ່ມີການເຄື່ອນໄຫວ ຫຼື ດຳເນີນກິດຈະກຳຕ່າງໆ ພາຍຫຼັງໄດ້ຮັບອະນຸຍາດ;
3. ການບໍລິຫານກຸ່ມບໍ່ໄປຕາມຈຸດປະສົງ ແລະ ກົດລະບຽບ ຂອງກຸ່ມ;
4. ສະມາຊິກກຸ່ມ ລາອອກ ເກີນສອງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ;
5. ມີການເຄື່ອນໄຫວ ຫຼື ດຳເນີນກິດຈະກຳ ທີ່ລະເມີດຕໍ່ກົດໝາຍ ຢ່າງຮ້າຍແຮງ;
6. ມີຄຳສັ່ງໃຫ້ຍຸບເລີກ ຂອງອົງການຈັດຕັ້ງລັດ ຫຼື ຖືກສານຕັດສິນໃຫ້ຍຸບເລີກ.

ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ທີ່ຍຸບເລີກ ຕ້ອງມີການຊຳລະສະສາງຊັບສິນ ແລະ ໜີ້ສິນ ຢ່າງຄົບຖ້ວນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 27 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ຂັດຂວາງການເຄື່ອນໄຫວຂອງກຸ່ມ;
2. ແອບອ້າງຊື່ ຫຼື ນຳໃຊ້ຊື່ຂອງກຸ່ມ ເຄື່ອນໄຫວໃນທາງບໍ່ຖືກຕ້ອງ;
3. ສ້າງຕັ້ງ ແລະ ເຄື່ອນໄຫວກຸ່ມ ໂດຍບໍ່ໄດ້ຮັບການອະນຸຍາດ;
4. ກົດໜ່ວງ, ຖ່ວງດຶງ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການສ້າງຕັ້ງ ແລະ ຄຸ້ມຄອງກຸ່ມຜູ້ນຳໃຊ້ນ້ຳ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 28 ຂໍ້ຫ້າມສຳລັບກຸ່ມ**

ຫ້າມ ກຸ່ມ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວການນຳໃຊ້ນ້ຳຂອງກຸ່ມທີ່ບໍ່ຖືກຕ້ອງ;
2. ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ບໍ່ຊັດເຈນ ຕໍ່ພະນັກງານທີ່ກ່ຽວຂ້ອງ;
3. ປອມແປງ, ບິດເບືອນຂໍ້ມູນຂອງຕົນ ຕໍ່ຜົນປະໂຫຍດຂອງກຸ່ມ ຊຶ່ງສ້າງຄວາມເສຍຫາຍ ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
4. ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນ ແກ່ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ, ລະບຽບການ ແລະ ກົດລະບຽບຂອງກຸ່ມ.

**ມາດຕາ 29 ຂໍ້ຫ້າມສຳລັບພະນັກງານທີ່ກ່ຽວຂ້ອງ**

ຫ້າມ ພະນັກງານຄຸ້ມຄອງວຽກງານກຸ່ມ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງ, ຖ່ວງດຶງ ຫຼື ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການສ້າງຕັ້ງ ແລະ ການເຄື່ອນໄຫວຂອງກຸ່ມ;
2. ຂໍເອົາ, ຮຽກເອົາ, ທວງເອົາ, ໃຫ້ ຫຼື ຮັບເອົາສິນບົນ ຈາກກຸ່ມ ແລະ ພາກສ່ວນອື່ນ;
3. ອອກ ຫຼື ປະຕິເສດ ການສ້າງຕັ້ງກຸ່ມ ໂດຍບໍ່ຖືກຕ້ອງຕາມຂໍ້ຕົກລົງສະບັບນີ້;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 30 ການຄຸ້ມຄອງ ແລະ ກວດກາ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກົມຊົນລະປະທານ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງ **"ກນຊ"** ປະກອບດ້ວຍ:

1. ຂັ້ນສູນກາງ ແມ່ນ ກົມຊົນລະປະທານ ກະຊວງກະສິກຳ ແລະ ປ່າໄມ້;
2. ຂັ້ນແຂວງ ແມ່ນ ຂະແໜງຊົນລະປະທານ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ;

3. ຂັ້ນເມືອງ ແມ່ນ ໜ່ວຍງານຊົນລະປະທານ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ, ນະຄອນ;
4. ຂັ້ນບ້ານ ແມ່ນ ອົງການປົກຄອງບ້ານ.

**ມາດຕາ 31 ສິດ ແລະ ໜ້າທີ່ ຂອງກົມຊົນລະປະທານ**

ໃນການຄຸ້ມຄອງວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງ **"ກນຊ"** ກົມຊົນລະປະທານ ມີ ສິດ ແລະ ໜ້າ ທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບ ວຽກງານການສ້າງຕັ້ງ ແລະ ຄຸ້ມຄອງ **"ກນຊ"** ເພື່ອສະເໜີຂັ້ນເທິງພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບ ວຽກງານ **"ກນຊ"** ໃຫ້ ກາຍເປັນແຜນການ, ແຜນງານ ແລະ ລະບຽບການສະເພາະ ພ້ອມທັງຊີ້ນຳການຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ, ຍຸດທະສາດ, ລະບຽບການ, ແຜນການ ແລະ ແຜນງານ ຂອງ ໂຄງການ ກ່ຽວກັບ ວຽກງານ **"ກນຊ"** ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;
4. ຊີ້ນຳ, ຕິດຕາມ ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານຂອງ **"ກນຊ"**;
5. ປະສານສົມທົບກັບອົງການຈັດຕັ້ງຂອງລັດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ເພື່ອສົ່ງເສີມການພັດທະ ນາ **"ກນຊ"** ໃຫ້ເຂັ້ມແຂງ;
6. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ເພື່ອຍົກລະດັບ ແລະ ພັດທະນາ **"ກນຊ"** ໃນ ຂອບເຂດທົ່ວປະເທດ;
7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານ ຂອງ **"ກນຊ"** ໃຫ້ກະຊວງກະສິກຳ ແລະ ປ່າ ໄມ້ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງຂະແໜງຊົນລະປະທານ**

ໃນການຄຸ້ມຄອງວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງ **"ກນຊ"** ຂະແໜງຊົນລະປະທານ ມີ ສິດ ແລະ ໜ້າ ທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ກົດໝາຍ, ນະໂຍບາຍ, ຍຸດທະສາດ, ລະບຽບການ, ແຜນການ ແລະ ແຜນງານ ຂອງ ໂຄງການ ກ່ຽວກັບ ວຽກງານ **"ກນຊ"** ພາຍໃນແຂວງ ແລະ ນະຄອນຫຼວງວຽງຈັນ ໃຫ້ກວ້າງຂວາງ ແລະ ທົ່ວເຖິງ;
2. ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານຂອງ **"ກນຊ"**;
3. ປະສານສົມທົບກັບຂະແໜງການອື່ນ ໃນການສົ່ງເສີມການພັດທະນາ, ການຝຶກອົບຮົມ ແລະ ການສ້າງ ຄວາມເຂັ້ມແຂງໃຫ້ ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;
4. ເກັບກຳ, ສັງລວມ ແລະ ສ້າງຖານຂໍ້ມູນ ກ່ຽວກັບ ວຽກງານພັດທະນາກຸ່ມ;
5. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີ ໃນການຈັດຕັ້ງປະຕິບັດວຽກງານ ຂອງກຸ່ມຜູ້ນຳໃຊ້ນ້ຳຊົນລະ ປະທານ;
6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານກຸ່ມ ໃຫ້ກົມຊົນລະປະທານ ແລະ ອົງການປົກ ຄອງຂັ້ນແຂວງ ຢ່າງເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 33 ສິດ ແລະ ໜ້າທີ່ ຂອງໜ່ວຍງານຊົນລະປະທານ**

ໃນການຄຸ້ມຄອງວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງ **"ກນຊ"** ໜ່ວຍງານຊົນລະປະທານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ຍຸດທະສາດ ແລະ ລະບຽບການ ກ່ຽວກັບ ວຽກງານຂອງກຸ່ມ ພາຍໃນເມືອງໃຫ້ທົ່ວເຖິງ;
2. ເຜີຍແຜ່, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານ ຂອງ **"ກນຊ"** ໂດຍສົມທົບກັບຫ້ອງການ, ອົງການຈັດຕັ້ງ ແລະ ອົງການປົກຄອງບ້ານ ທີ່ກ່ຽວຂ້ອງ ຢ່າງປົກກະຕິ;
3. ຝຶກອົບຮົມວຽກງານຄຸ້ມຄອງ ແລະ ນຳໃຊ້ຊົນລະປະທານ, ວຽກງານແຜນການ-ການເງິນ ແລະ ວາງແຜນການຜະລິດກະສິກຳໃຫ້ກຸ່ມ ຢ່າງປົກກະຕິ;
4. ຕິດຕາມ, ກວດກາ, ຊຸກຍູ້ ແລະ ເກັບກຳຂໍ້ມູນສະຖິຕິກຸ່ມ ເພື່ອວາງແຜນ ແລະ ພັດທະນາກຸ່ມໃຫ້ເຂັ້ມແຂງ;
5. ຮັບ ແລະ ພິຈາລະນາແກ້ໄຂ ຄຳສະເໜີ ໃນການຈັດຕັ້ງປະຕິບັດວຽກງານ ຂອງກຸ່ມຜູ້ນຳໃຊ້ນ້ຳ;
6. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານ ຂອງ **"ກນຊ"** ເພື່ອລາຍງານຂັ້ນເທິງ ເປັນປົກກະຕິ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 34 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງວຽກງານການສ້າງຕັ້ງ ແລະ ການຄຸ້ມຄອງ **"ກນຊ"** ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ກົດໝາຍ, ລະບຽບການ ແລະ ຂໍ້ມູນຂ່າວສານ ກ່ຽວກັບ ວຽກງານ **"ກນຊ"** ໃຫ້ປະຊາຊົນພາຍໃນບ້ານຂອງຕົນ ໄດ້ຮັບຊາບ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;
2. ໃຫ້ຄວາມຮ່ວມມື ແລະ ເຂົ້າຮ່ວມໃນການສ້າງແຜນການຟື້ນຟູ-ສ້ອມແປງຊົນລະປະທານ ແລະ ການວາງແຜນການຜະລິດ ຂອງກຸ່ມ;
3. ເຂົ້າຮ່ວມກອງປະຊຸມຝຶກອົບຮົມວຽກງານຕ່າງໆ ທີ່ກ່ຽວຂ້ອງກັບການຈັດຕັ້ງຂອງກຸ່ມ;
4. ເຂົ້າຮ່ວມກອງປະຊຸມ ປະຈຳເດືອນ, ປະຈຳໄຕມາດ ແລະ ປະຈຳປີຂອງກຸ່ມ;
5. ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບ ວຽກງານຂອງກຸ່ມ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 35 ການກວດກາ**

ການກວດກາ ແມ່ນການຕິດຕາມ, ກວດກາການເຄື່ອນໄຫວ ການສ້າງຕັ້ງ ແລະ ການຄຸ້ມຄອງ ກຸ່ມຜູ້ນຳໃຊ້ນ້ຳຊົນລະປະທານ ປະກອບມີ:

1. ກວດກາພາຍໃນ ແມ່ນຄະນະບໍລິຫານງານກຸ່ມ ເປັນຜູ້ດຳເນີນການກວດກາ;
2. ກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 36 ເນື້ອໃນການກວດກາ**

ການກວດກາການສ້າງຕັ້ງ ແລະ ການຄຸ້ມຄອງ **"ກນຊ"** ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ ແລະ ກົດລະບຽບກ່ຽວກັບກຸ່ມ;

2. ການປະຕິບັດໜ້າທີ່ຂອງ ຄະນະບໍລິຫານງານກຸ່ມ, ຄະນະກວດກາ ແລະ ສະມາຊິກ;

3. ກວດກາການເຄື່ອນໄຫວວຽກງານ ການເງິນ, ການບັນຊີ, ການນໍາໃຊ້ທຶນ ແລະ ຊັບສິນຕ່າງໆ ຂອງ **"ກນຊ"** ລວມທັງການຮ່ວມມືຈາກສະມາຊິກ.

**ມາດຕາ 37 ການແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງທີ່ເກີດຂຶ້ນ ກ່ຽວກັບ ການສ້າງຕັ້ງ ແລະ ການຄຸ້ມຄອງ **"ກນຊ"** ເປັນຕົ້ນ ຂໍ້ຂັດແຍ່ງ ລະຫວ່າງ ສະມາຊິກ, ສະມາຊິກ ກັບການຈັດຕັ້ງ ແລະ ກຸ່ມ ດ້ວຍກັນ ຫຼື ກັບພາກສ່ວນອື່ນ ໃຫ້ດໍາເນີນການແກ້ໄຂດ້ວຍຮູບການ ການໄກ່ເກ່ຍ ຫຼື ການປະນີປະນອມ ໂດຍ **"ກນຊ"** ຫຼື ການຈັດຕັ້ງລັດທີ່ກ່ຽວຂ້ອງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍການແກ້ໄຂຄໍາຮ້ອງທຸກ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 38 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດໃນການຄຸ້ມຄອງບໍລິຫານກຸ່ມ ໃຫ້ເຕີບໃຫຍ່ຂະຫຍາຍຕົວ, ເຂັ້ມແຂງ ແລະ ຍືນຍົງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 39 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 40 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຊົນລະປະທານ ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ແລະ ເຜີຍແຜ່ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 41 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ປອ. ເພັດ ພົມພິພັກ